**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການແຫ່ງຊາດ ເພື່ອຕ້ານ
ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ເລກທີ 06/ຄຕຟງ
ນະຄອນຫຼວງວຽງຈັນ, ວັນທີ 19 MAY 2015

# ຄຳແນະນຳ
# ວ່າດ້ວຍ ການແຈ້ງ ເງິນສົດ, ວັດຖຸມີຄ່າ ແລະ ເຄື່ອງມືທາງດ້ານການເງິນ ໃນເວລາ ເຂົ້າ-ອອກ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການແຫ່ງຊາດເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 364/ນຍ, ລົງວັນທີ 13 ຕຸລາ 2014;
- ອີງຕາມກົດໝາຍວ່າດ້ວຍ ພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011;
- ອີງຕາມໜັງສືສະເໜີຂອງໜ່ວຍງານຂໍ້ມູນຕ້ານການຟອກເງິນ ສະບັບເລກທີ 446/ໜຕຟງ, ລົງວັນທີ 7 ພຶດສະພາ 2015.

**ປະທານຄະນະກຳມະການແຫ່ງຊາດ**
**ເພື່ອຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ອອກຄຳແນະນຳ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຄຳແນະນຳສະບັບນີ້ ວາງອອກເພື່ອຜັນຂະຫຍາຍ ມາດຕາ 33 ການແຈ້ງເງິນສົດ, ວັດຖຸມີຄ່າ ຫຼື ເຄື່ອງມືທາງດ້ານການເງິນ ແລະ ມາດຕາ 34 ການກວດກາຂອງເຈົ້າໜ້າທີ່ພາສີປະຈຳດ່ານຊາຍແດນ ຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ມີຄວາມຊັດເຈນ ໃນການຈັດຕັ້ງປະຕິບັດ.

**ມາດຕາ 2 ອະທິບາຍຄຳສັບ**

**ຄຳສັບທີ່ໃຊ້ໃນຄຳແນະນຳສະບັບນີ້ ມີຄວາມໝາຍ ດັ່ງນີ້:**

1. **ເງິນສົດ ໝາຍເຖິງ** ທະນະບັດ ທີ່ເປັນສະກຸນເງິນຕ່າງໆ ຫຼື ເງິນຫຼຽນ;

2. **ເຄື່ອງມືທາງດ້ານການເງິນ ໝາຍເຖິງ** ແຊັກທະນາຄານ, ແຊັກເດີນທາງ, ແຊັກສັ່ງຈ່າຍ, ພັນທະບັດ, ດຣາບ (Bank Draft) ແລະ ອື່ນໆ .
3. **ວັດຖຸມີຄ່າ ໝາຍເຖິງ** ເງິນ ຫຼື ຄຳ ແທ່ງ, ເງິນ ຫຼື ຄຳ ຮູບປະພັນ, ເພັດ, ພອຍ ແລະ ອື່ນໆ ທີ່ມີມູນຄ່າ ຫຼື ນຳໃຊ້ເປັນພາຫະນະຊຳລະກັບສາກົນໄດ້;
4. **ຜູ້ໂດຍສານ ໝາຍເຖິງ** ຄົນລາວ, ຄົນຕ່າງປະເທດ ຫຼື ຊາວຕ່າງດ້າວ ທີ່ເດີນທາງ ເຂົ້າ-ອອກ ສປປ ລາວ ໃນນາມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
5. **ດ່ານພາສີຊາຍແດນ ໝາຍເຖິງ** ດ່ານພາສີສາກົນ, ດ່ານພາສີທ້ອງຖິ່ນ ແລະ ດ່ານພາສີປະເພນີ ທີ່ອະນຸຍາດໃຫ້ຜູ້ໂດຍສານ, ພາຫະນະ ແລະ ສິນຄ້າເຂົ້າ-ອອກ ສປປ ລາວ ລວມທັງສິນຄ້າເຂົ້າ-ອອກ ສປປ ລາວ ຜ່ານລະບົບໄປສະນີ.

## ໝວດທີ 2
## ການແຈ້ງ ເງິນສົດ, ວັດຖຸມີຄ່າ ແລະ ເຄື່ອງມືທາງດ້ານການເງິນ

### ມາດຕາ 3 ການແຈ້ງຂອງຜູ້ໂດຍສານ ເຂົ້າ-ອອກ ສປປ ລາວ

ຜູ້ໂດຍສານ ເດີນທາງເຂົ້າ-ອອກ ສປປ ລາວ ທີ່ນຳ ເງິນສົດ, ວັດຖຸມີຄ່າ ຫຼື ເຄື່ອງມືທາງດ້ານການເງິນ ເຂົ້າ-ອອກ ສປປ ລາວ ທີ່ມີມູນຄ່າທຽບເທົ່າ 100.000.000 ກີບ (ໜຶ່ງຮ້ອຍລ້ານກີບ) ຂຶ້ນໄປ ຕ້ອງແຈ້ງຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານຊາຍແດນ ຕາມແບບພິມຂອງກົມພາສີ, ກະຊວງການເງິນ ວາງອອກ.

### ມາດຕາ 4 ຂັ້ນຕອນຂອງການແຈ້ງ

ຜູ້ໂດຍສານ ທີ່ນຳເງິນສົດ, ວັດຖຸມີຄ່າ ຫຼື ເຄື່ອງມືທາງດ້ານການເງິນ ເຂົ້າ-ອອກ ສປປ ລາວ ທີ່ມີມູນຄ່າທຽບເທົ່າ 100.000.000 ກີບ (ໜຶ່ງຮ້ອຍລ້ານກີບ) ຂຶ້ນໄປ ຕ້ອງປະຕິບັດ ດັ່ງນີ້:

1. **ການແຈ້ງເຂົ້າ ສປປ ລາວ:**
   - ປະກອບຂໍ້ມູນໃສ່ແບບພິມການແຈ້ງນຳເຂົ້າ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ;
   - ສົ່ງມອບແບບພິມ ພ້ອມທັງສະແດງເງິນສົດ, ວັດຖຸມີຄ່າ ຫຼື ເຄື່ອງມືທາງດ້ານການເງິນ ໃຫ້ແກ່ເຈົ້າໜ້າທີ່ປະຈຳດ່ານຊາຍແດນ ເພື່ອກວດກາ.
2. **ການແຈ້ງອອກ ສປປ ລາວ:**
   - ປະກອບຂໍ້ມູນຕາມແບບພິມການແຈ້ງອອກໃຫ້ຖືກຕ້ອງ ແລະ ຄົບຖ້ວນ;
   - ສົ່ງມອບແບບພິມ ພ້ອມທັງສະແດງເງິນສົດ, ວັດຖຸມີຄ່າ ຫຼື ເຄື່ອງມືທາງດ້ານການເງິນ ໃຫ້ແກ່ເຈົ້າໜ້າທີ່ພາສີປະຈຳດ່ານຊາຍແດນ ເພື່ອກວດກາ;
   - ສະແດງໜັງສືອະນຸຍາດການນຳເງິນສົດ, ວັດຖຸມີຄ່າ ຫຼື ເຄື່ອງມືທາງດ້ານການເງິນ ຈາກອົງການທີ່ກ່ຽວຂ້ອງ;
   - ສະແດງເອກະສານຢັ້ງຢືນການນຳເຂົ້າເງິນສົດ, ວັດຖຸມີຄ່າ ຫຼື ເຄື່ອງມືທາງດ້ານການເງິນ.

### ມາດຕາ 5 ການກວດກາຂອງເຈົ້າໜ້າທີ່ພາສີ

ເມື່ອເຈົ້າໜ້າທີ່ພາສີປະຈຳດ່ານຊາຍແດນ ໄດ້ຮັບການແຈ້ງກ່ຽວກັບເງິນສົດ, ວັດຖຸມີຄ່າ ຫຼື ເຄື່ອງມືທາງດ້ານການເງິນ ຈາກຜູ້ໂດຍສານ ເຂົ້າ-ອອກ ສປປ ລາວ ຕ້ອງກວດກາ, ກວດນັບ ແລະ ຢັ້ງຢືນເອກະສານການແຈ້ງເງິນສົດ, ວັດຖຸມີຄ່າ ຫຼື ເຄື່ອງມືທາງດ້ານການເງິນ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບເອກະສານການແຈ້ງຂອງຜູ້ໂດຍສານ.

**ມາດຕາ 6 ການລາຍງານຂອງເຈົ້າໜ້າທີ່ພາສີປະຈຳດ່ານຊາຍແດນ**

ເຈົ້າໜ້າທີ່ພາສີປະຈຳດ່ານຊາຍແດນ ໄດ້ຮັບການແຈ້ງຂອງຜູ້ໂດຍສານ ເຂົ້າ-ອອກ ຫຼື ກວດເຫັນ, ພົບເຫັນ ການນຳເງິນສົດ, ວັດຖຸມີຄ່າ ແລະ ເຄື່ອງມືທາງດ້ານການເງິນ ທີ່ມີມູນຄ່າທຽບເທົ່າ 100.000.000 ກີບ (ໜຶ່ງຮ້ອຍລ້ານກີບ) ຂຶ້ນໄປ, ເຈົ້າໜ້າທີ່ພາສີປະຈຳດ່ານຊາຍແດນ ຕ້ອງລາຍງານຂໍ້ມູນດັ່ງກ່າວ ໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນ ພາຍໃນ 15 ວັນ ລັດຖະການ ຕາມແບບພິມທີ່ສຳນັກງານຂໍ້ມູນຕ້ານການຟອກເງິນ ວາງອອກ.

**ມາດຕາ 7 ການເກັບຮັກສາເງິນສົດ, ວັດຖຸມີຄ່າ ແລະ ເຄື່ອງມືທາງດ້ານການເງິນ**

ກໍລະນີເຈົ້າໜ້າທີ່ພາສີປະຈຳດ່ານຊາຍແດນ ໄດ້ຍຶດ ຫຼື ກັກ ເງິນສົດ, ວັດຖຸມີຄ່າ ຫຼື ເຄື່ອງມືທາງດ້ານການເງິນ ທີ່ບໍ່ມີເອກະສານຢັ້ງຢືນຄວາມຖືກຕ້ອງ ໃຫ້ເຈົ້າໜ້າທີ່ພາສີປະຈຳດ່ານພາສີຊາຍແດນ ນຳໄປຝາກໄວ້ບັນຊີຂອງຄັງເງິນແຫ່ງຊາດ ເພື່ອເປີດການສືບສວນ-ສອບສວນ.

## ໝວດທີ 3
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 8 ນະໂຍບາຍຕໍ່ຜູ້ມີຜົນງານ**

ສຳນັກງານຂໍ້ມູນຕ້ານການຟອກເງິນ ມີໜ້າທີ່ເກັບກຳຜົນງານດີເດັ່ນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນການຈັດຕັ້ງປະຕິບັດວຽກງານກວດກາ ການນຳເງິນສົດ, ວັດຖຸມີຄ່າ ຫຼື ເຄື່ອງມືທາງດ້ານການເງິນ ເພື່ອຄົ້ນຄວ້າການຍ້ອງຍໍຕາມລະບຽບການ.

**ມາດຕາ 9 ມາດຕະການຕໍ່ຜູ້ລະເມີດ**

ຫາກເຈົ້າໜ້າທີ່ພາສີ ກວດເຫັນ, ພົບເຫັນ ຫຼື ມີການແຈ້ງຂໍ້ມູນເທັດ, ຫຼີກລ້ຽງການແຈ້ງ ໃຫ້ເຈົ້າໜ້າທີ່ພາສີ ດຳເນີນຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 10 ການຈັດຕັ້ງປະຕິບັດ**

ມອບໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນ, ປະສານສົມທົບກັບ ກົມພາສີ, ກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 11 ຜົນສັກສິດ**

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງທີ່ໄດ້ລົງຈົດໝາຍເຫດທາງລັດຖະການ 15 ວັນ.

**ປະທານຄະນະກຳມະການແຫ່ງຊາດເພື່ອຕ້ານ**
**ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ປະທານ

ດຣ.ບຸນປອນ ບຸດຕະນະວົງ